# ຕ ຳ ນ າ ນ

## ວັດຈອມສີ, ວັດຊຽງທອງ ແລະວັດໃຫມ່ ສຸວັນພຸມມາຣາມ

## ຫລວງພຣະບາງ

## ແ ລ ະ

## ພຣະຊີວະປວັດຢໍ້ຂອງສົມເດັດພຣະສັງຄະຣາດ

## ທັມມະຍານະມະຫາເຖຣະ ( ບຸນທັນ )

----==×O×==----

## ຕຳນານ ຫລື ປະວັດ ພູສີ ຫລວງພຣະບາງ

-----=0=-----

ໃນກາລະນັ້ນ ຍັງມີ ອະນະຣະ ຣິສີ ແລະ ໂຍທິກະ ຣິສີ ສອງພີ່ນ້ອງ ມາຕັ້ງເປັນຫລັກເມືອງ ແລ້ວປຣະດິສຖານພຣະພຸທບາດ ໄວ້ຈອມພູ ໃຫ້ພູມີບຸນອັນເປັນກະສັດ ຄ້ຳສາສນາພຣະໂຄຕະມະເຈົ້າ ດີຫລີແລ.

ເມື່ອກະສັດຍັຕນັ້ນທານມາຢູ່ ຈິ່ງປຣາກົດຊື່ໄວ້ວ່າ ພູນັ້ນທະກາງຣິສີສັດຕະນາຄະ ຕໍ່ມາໃນຣັຊການສົມເດັດພຣະເຈົ້າ ອະນຸຣຸດ ພຣະອົງຊົງສ້າງພຣະທາດ ໃສ່ຈອມພູຂຶ້ນແລ້ວ ພູຫນ່ວຍນີ້ກໍມີວັນນະສງ່າງາມ ຈິ່ງຊື່ວ່າ ພູສີ ແລະທາດນັ້ນ ກໍເອີ້ນວ່າທາດຈອມພູສີ ຫລື ທາດຈອມສີ ແຕ່ ສະມະນະພຣາມມາຈານ ເສນາອາມາດ ຣາຊະປຸໂຣຫິດ ຮຽກວ່າ ທາດຫລັກເມືອງ ພຣະທາດອົງນີ້ ມີຕີນບ້າງມົນທົນ ດ້ານລະ ໑໐ ແມັດ ໔໔ ຊອງ ແລະ ສູງ ໒໑ ແມັດ, ສ່ວນພູສີນັ້ນ ສູງປຣະມານ ໑໔໐ ແມັດຊົ່ວ ມີຂັ້ນໄດຂຶ້ນ ແຕ່ທາງຫລວງໄປເຖິງຫົວຂັ້ນໄດແທ່ນຮົ້ວລ້ອມພຣະທາດນັ້ນ ມີ ໓໒໗ ຂັ້ນ.

ຕໍ່ມາ ເຖິງຣັຊການ ສົມເດັດພຣະເຈົ້າ ສຣີສວ່າງວົງ ພຣະອົງໄດ້ຊົງໂປຣດເກົ້າ ໃຫ້ຊ່າງຣິຈນາ ປະຕິສັງຂອນຂຶ້ນໃຫມ່ ໃນປີ ໑໙໑໔.

ໃນປີ ໑໙໕໖ ຫາ ໑໙໕໗ ພຣະບາດສົມເດັດພຣະເຈົ້າ ສຣີສວ່າງວັທນາ ແລະ ພຣະອັຄມະເຫສີ ໄດ້ຊົງສ້າງຂັ້ນໄດຖາວອນໃສ່ ແຕ່ເມື່ອພຣະອົງຍັງຊົງດຳຣົງພຣະຕຳແຫນ່ງເປັນ ມະກຸດຣາຊກຸມານ ຢູ່ນັ້ນ.

ໂດຍທີ່ເປັນປະເພນີນິຍົມ ກ່ຽວກັບຂໍ້ຄວາມອັງເຊີນ ຫລື ວິງວອນຕໍ່ສິ່ງສັກສິດ ປຣາກົດໃນການສ່ວາຍວ່າ ສີສັດຕະນາກເຈົ້າ ຢູ່ເຝົ້າຈອມສີ ຫມາຍຄວາມວ່າ ຈອມພູ ບ່ອນນີ້ ເປັນທີ່ຢູ່ຂອງພຣະຍານາກ ຄື ສີສັດຕະນາກ.

-----=0=-----

## ປຣະວັດ ວັດຊຽງທອງ

---=x=---

ວັດຊຽງທອງ ເປັນວັດເມືອງຊຽງທອງ ເພາະ ເມືອງຫລວງພຣະບາງແຕ່ກ່ອນ ໄດ້ມີຊື່ວ່າ ເມືອງຊຽງທອງ ເປັນວັດຢູ່ຫົວນາກ ຫລື ຫົວເມືອງ ສີສັດຕະນາກ ຣາຊທານີມະຫານະຄອນ ຂອງປຣະເທດລ້ານຊ້າງ. ຄວາມສຳຄັນມີວ່າ ມີສັງຂານເນົາ ທຸກປີມີການແຫ່ວໍ ຫລືກະບວນແຫ່ພຣະສົງສາມະເນນຟ່າຍໄຕ ນຳນ້ຳສົງຂຶ້ນໄປຣົດສົງພຣະພຸທຣູບທີ່ວັດຊຽງທອງນັ້ນ ແລະ ມີການຟ້ອນຣູບ ຢູ່ເຍີ່ຍາເຍີ້ ທີ່ວັດຊຽງທອງນັ້ນ ໃນວັນແລະເວລາດຽວກັນນັ້ນເອງ. ແລະ ເມື່ອພຣະເຈົ້າແຜ່ນດິນ ໄດ້ສະເດັດພຣະຣາຊດຳເນີນໄປປຣະເທດນອກ ກັບມາ ທຸກຄັ້ງ ໄດ້ສະເດັດຂຶ້ນນະມັສການພຣະພຸທຣູບ ຣັບຖວາຍໄຊຍັນໂຕ ຊົງສິນຫ້າ ແລ້ວຈຶ່ງສະເດັດໂດຍກະບວນແຫ່ ເຂົ້າສູ່ພຣະບໍຣົມມະຫາຣາຊວັງ. ແລະພຣະພິທີການ ສຳຄັນຍິ່ງກວ່ານັ້ນ ເມື່ອພຣະເຈົ້າແຜ່ນດິນ ຈະຊົງຣັບນ້ຳມຸຣທາພິເສກ ຂຶ້ນເປັນພຣະມະຫາກະສັດ ສເວີຍຣາຊສົມບັດ ໄດ້ສະເດັດໄປຊົງສິນເປັນຜ້າຂາວ ຢູ່ວັດລ້ອງຄູນ ແລ້ວສະເດັດມາປຣະທັບທີ່ພານໄຊ ດອນຊາຍມຸງຄູນ ສົງນ້ຳພຣະພຸທມົນແລ້ວ ສະເດັດລົງເຮືອພຣະທີ່ນັ່ງ ໄປຈອດທ່າວັດຊຽງທອງແລ້ວ ສະເດັດຂຶ້ນທຳສັກກາຣະບູຊາ ຊົງຣັບໄຊຍັນໂຕ ຊົງສິນຫ້າຈາກພຣະສົງ ແລ້ວຈຶ່ງສະເດັດເຂົ້າຣົດສົງ ທີ່ພຣະບໍຣົມມະຫາຣາຊວັງ ດ້ວຍພຣະຣາຊພິທີມຸຣທາພິເສກ. ຫາກ

ເປັນພຣະຣາຊປຣະເພນີ ສືບມາແຕ່ໂບຣານະການ.

ວັດຊຽງທອງນີ້ ຊຶ່ງຕົ້ນແມ່ນ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ຊົງສ້າງຂຶ້ນ ໃນ ຄ.ສ. ໑໕໖໐ ໄວ້ເປັນອະນຸສາວະຣີ ຕົ້ນທອງໃຫຍ່ ອ້ອມໄດ້ ໔໗ ວາ ສູງ ໑໑໗ ວາ ຊຶ່ງປາກົດມີເຣື່ອງກ່າວກັນວ່າ ທີ່ແຫ່ງນັ້ນ ເດີມເປັນປ່າໄມ້ທອງ ທ້າວຈັນທະພານິດ ຜູ້ໄດ້ຮັບໂຊກຊາຕາໃນເມືອງຊວາ ໄດ້ຈັບຈອງສຖານທີ່ແຫ່ງນັ້ນສ້າງເປັນວັດຂຶ້ນກ່ອນ ຈຶ່ງປາກົດເຫັນຮູບອະນຸສາວະຣີ ຕົ້ນໄມ້ທອງ ແລະ ຮູບປະວັດຈັນທະພານິດ ຕິດໄວ້ກັບຝາອາຣາມນັ້ນ ຈົນບັດນີ້.

ຕໍ່ມາ ໃນຣັຊະສໄມຂອງ ສົມເດັດພຣະເຈົ້າສັກຣິນ ກໍ່ໄດ້ຊົງປະຕິສັງຂອນຂຶ້ນ ເປັນການຮັກສາໄວ້ ຕາມຊວດຊົງຂອງເດີມ ແລະຕໍ່ມາ ໃນປັດຈຸບັນນີ້ ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ສີສວ່າງ ວັທນາ ໄດ້ຊົງປຣະດັບດ້ວຍດອກດວງ ລວງລາຍ ແລະໄດ້ຊົງໂປຣດເກົ້າ ໃຫ້ອັງເຊີນເອົາພຣະພຸທຮູບ ໄສຍາດ ທີ່ໄດ້ເຊີນເອົາໄປສເນີ ທີ່ປຣະເທດຝຣັ່ງເສດ ກັບຄືນມາພັກໄວ້ວຽງຈັນນັ້ນ ໃຫ້ໄດ້ມາປະດິສຖານໄວ້ທີ່ຫໍໄຫວ້ແຫ່ງເດີມ ໃນ ຄ.ສ. ໑໘໖໕. ແລະຊົງໂປຣດເກົ້າ ໃຫ້ສ້າງຫໍຣາຊຣົດ ສ້າງຫໍກອງ ສ້າງກຸຕິສົງ ແທນຫລັງທີ່ຖືກຍັກຍ້າຍ ໃສ່ບ່ອນສົມຄວນ ແລະສ່ວນອື່ນໆຫຼາຍປຣະການ.

-----===0========-----

ປຣະວັດ ວັດໃໝ່ ( ວັດສີສຸວັນນະພຸມມາຣາມ )

---==X==---

ວັດໃໝ່ ທີ່ປຣະທັບຂອງ ສົມເດັດພຣະສັງຄະຣາດ ໃນປັດຈຸບັນນີ້ນັ້ນ ເດີມ

ມີຊື່ວ່າ ວັດສີສຸວັນນະພຸມມາຣາມ ສົມເດັດພຣະເຈົ້າອະນຸຣຸດ ຈຶງສະຖາປະນາສ້າງຂຶ້ນ ໃນປີ ຄ.ສ. ໑໗໙໖ ເປັນຫົວທີ ຕໍ່ມາໃນປີ ໑໘໒໑ ແຫ່ງຄຣິຕສັກຣາຊ (ຄຣິຕສົກ) ສົມເດັດພຣະເຈົ້າມັງທາຕຸຣາດ ໄດ້ຈຶງປະຕິສັງຂອນຂຶ້ນໃໝ່ ແລະສ້າງພຣະປຣະທານອົງໃຫຍ່ ກັບພຣະທາດສອງລູກນັ້ນ ໃສ່ຫລັງແທ່ນພຣະຊາຍແລະຂວາ ພ້ອມທັງຫໍຂວາງ ເບື້ອງໜ້າ ແລະເບື້ອງກຍ ຈຶ່ງໃຫ້ຊື່ວ່າ ວັດໃໝ່ ຕັ້ງແຕ່ນັ້ນມາ.

ແລະຕໍ່ມາ ເຖິງປີ ໑໘໙໑ ສົມເດັດພຣະເຈົ້າສັກຣິນ ຄຳສຸກ ຈຶງສ້າງຣະບຽງ ຊ້າຍ ຂວາ ໃສ່ອີກ ແລະຕໍ່ມາ ໃນປີ ຄ.ສ. ໑໘໙໔ ໄດ້ອັນເຊີນ ພຣະບາງເຈົ້າ ຈາກວັດວິຊຸນ ມາປຣະດິສຖານທີ່ ວັດໃໝ່ ນີ້.

ຕໍ່ມາ ໃນຣັຊການ ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ສຣີສວ່າງວັທນາ ໄດ້ຈຶງປະຕິສັງຂອນ ຫໍຂວາງ ເບື້ອງໜ້າ ພ້ອມດວ້ຍການປະດັບດອກດວງລວດລາຍຕ່າງໆໃສ່ ເປັນຕົ້ນ ຣາວລົມ ແລະຝາພຣະອຸໂປສົດ.

ຄັດຈາກຕົ້ນສະບັບຂອງ ສາທຸພໍ່ຄຳໝັ້ນ ວົງກົດຣັຕນະ

ຫລວງພຣະບາງ, ວັນທີ່ ໒໑ ມີນາ ໑໙໖໖

---------===0===--------

ພຣະຊີວະປຣະວັດຫຍໍ້

ຂອງອົງສົມເດັດພຣະສັງຄະຣາດ ທັມມະຍານະມະຫາເຖຣະ

--=x=--

ສົມເດັດພຣະສັງຄະຣາດ ທັມມະຍານະມະຫາເຖຣະ ເດີມພຣະອົງມີ

ກໍາເນີດຢູ່ພຣະນະຄອນຫລວງພຣະບາງ ເກີດເມື່ອວັນທີ່ ໘ ກຸມພາ ໑໘໙໒, ເປັນບຸດຂອງ ຊຽງພຸຍ ແລະ ສາວປ້ອງ ບ້ານປ່າຂາມ ຕາແສງປ່າຂາມ ເທສບານນະຄອນຫລວງພຣະບາງ ມີພີ່ເອື້ອຍຄົນນຶ່ງຊື່ ນາງເພັຍຊາວ ພີ່ອ້າຍສອງຄົນ ຄື: ແສນໃຫມ່ຫລ້າ ແລະພະຍາເມືອງຂວາ (ທ້າວເຫລັກ) ແລະມີນ້ອງຊາຍຄົນນຶ່ງຊື່ ເພັຍອະນຸຣັກສ໌ (ທ້າວອິ້ນ) ຣ່ວມເປັນບຸດ ຣ່ວມອຸທອນນໍາກັນ ໕ ຄົນ.

ສ່ວນອົງຄ໌ສົມເດັດ ເປັນບຸດຖ້ວນ ໕ ມີນາມເດີມວ່າ " ບຸນທັນ " ເມື່ອອາຍຸໄດ້ ໑໒ ປີ ຄິດເຖິງປີ ໑໙໐໕, ກໍໄດ້ບັນພຣະຊາ ເປັນສາມະເນນ ເປັນລູກສິສຍ໌ຂອງ ພຣະຄຣູເຫລັກ ( ນ້ອຍ ) ຢູ່ວັດລ້ອງຄູນ ຕາແສງຊຽງແມນ ຫລວງພຣະບາງ ເວລານັ້ນ ແມ່ນພຣະຄຣູສົມເດັດຕົນ ວັດໃຫມ່ ເປັນອົງຄ໌ປຣະມຸກສົງຄ໌ໃນແຂວງຫລວງພຣະບາງ.

ຕໍ່ມາ ອາຍຸໄດ້ ໒໑ ປີ ຄິດເຖິງປີ ໑໙໑໒ ໄດ້ອຸປະສົມບົດເປັນ ພຣະພິກຂຸ ນາມສາຍາວ່າ " ທັມມະຍາໂນ " ໃນພັທສີມາ ວັດປ່າໄຜ່ ຕາແສງຊຽງມ່ວນ ມີພຣະຄຣູ ອັຄຄະວໍຣະຣາຊຄຣູເພັງ ເປັນພຣະອຸປັຊຊາ, ພຣະຄຣູພຸມມາ ວັດທາດສຽວ ເປັນກັມມະວາຈາຈາຣຍ໌ ແລະມີພຣະຄຣູພາ ວັດລ້ອງຄູນ ເປັນອະນຸສາວະນາຈາຣຍ໌ ໂດຍສັດທາ ແສນໃຫມ່ຊາ ບ້ານປ່າໄຜ່ ເມື່ອອຸປະສົມບົດແລ້ວ ກໍໄດ້ກັບໄປປະຕິບັດກິຈວັດ ຢູ່ວັດລ້ອງຄູນ ດັ່ງເດີມ.

<u>ລໍາດັບພຣະມະຫາເຖຣະ ອົງຄ໌ເປັນປະມຸກສົງຄ໌.</u>

ໃນຣະຍະທີ່ ພຣະຊີວະປຣະວັດຂອງສົມເດັດ ເປັນບັນພະຊິດ ໄດ້ຜ່ານມາ ພຣະມະຫາເຖຣະ ທີ່ໄດ້ຮັບຕໍາແຫນ່ງເປັນປະມຸກສົງຄ໌ ຕໍ່ກັນມາ ມີ :-

໑/- ສົມເດັດຕັນ ວັດໃໝ່

໒/- ສົມເດັດປານ ວັດທາດ ( ຊຶ່ງໄດ້ຕຳແໜ່ງສົມເດັດພຣະສັງຄະ ຣາດ ຕັ້ງແຕ່ອົງຄ໌ນັ້ນມາ ແລະໄດ້ມາປຣະທັບຢູ່ວັດໃໝ່)

໓/- ສົມເດັດຄູນ ວັດທາຕຸ ( ປຣະທັບຢູ່ວັດທາຕຸເລີຍ )

໔/- ພຣະອັຄຄະຊວຣະຣາຊຄຣູ ( ເພັງ ) ຢູ່ວັດຖ້ຳ ( ສັກກະລິນ ທະຄູຫາ )

໕/- ພຣະຄຣູທອງຈັນທຣ໌ ວັດເຕົາໄຫ ຕາແສງພົນຫລວງ ໄດ້ຮັບຕຳ ແໜ່ງເປັນ ສົມເດັດສັງຄະນາຍົກ ( ຢູ່ວັດພົນຫລວງ ).

ຊຶ່ງໝົດເຊັ່ນ ແຕ່ລະພຣະອົງຄ໌ທ່ານນັ້ນໆ ແລະກໍໄດ້ຮັບຕຳແໜ່ງດັ່ງກ່າວ ນັ້ນ ສືບໆມາ ຕາບເທົ້າເຖິງສົມເດັດພຣະສັງຄະຣາດ ທັມມະຍານະມະຫາເຖຣະ ນັ້ນ ເປັນອົງຄ໌ຖ້ວນ ໗ ແຕ່ປີ ໑໙໓໗ ເຖິງບັດນີ້.

<u>ລຳດັບຂັ້ນ ແລະສະມະນະກິດຂອງພຣະອົງຄ໌ທ່ານ</u>.

໑/- ໄດ້ຮັບເລືອກຕັ້ງ ເປັນເຈົ້າອາທິການ ວັດລ້ອງຄູນ ໃນປີ ໑໙໒໓ ຊຶ່ງແທນພຣະຄຣູມ້າວ ເຈົ້າອາທິການວັດ ອົງຄ໌ເກົ່າ ໄດ້ມໍຣະນະພາບໄປ.

ແລະໃນຣະຫວ່າງນັ້ນ ໄດ້ຖືກນິມົນໄປປຣະຊຸມສົງຄ໌ຢູ່ນະຄອນວຽງຈັນທນ໌ ເພື່ອຕົກລົງແຕ່ງປັ້ນ ອາທິພົມມະຈະຣິຍະກາສິກຂາ ອອກພິມເຜີຍແຜ່ ແລະຕົກລົງເຣື່ອງ ສັງຄະກັມມ໌ຕ່າງໆ ມີອຸໂປສົດແລະປະວາຣະນາເປັນຕົ້ນ ຊຶ່ງກອງປຣະຊຸມສົງຄ໌ມີທ່ານຜູ້ນະ ຄຣູຫລັກຄຳ ແກ້ວ ເປັນປຣະທານສົງຄ໌ ອາຈາຣຍ໌ຜູ້ສຳຄັນຝ່າຍຄະຣິຫັດ ກໍແມ່ນ ທ່ານ ມະຫາພົມ ແລະ ທ່ານມະຫາແກ້ວ ອົງຄ໌ອຸປະຖັມແມ່ນ ສເດັດຣາຊພຣະຄືໄນ ( ເພັຊ ຣາຊ ).

໔/- ຕໍ່ຈາກນັ້ນ ກໍໄດ້ຮັບຕໍາແໜ່ງສະມະນະກິດອີກ ຄື ເປັນທີ່ປຶກສາ ຂອງສົມເດັດພຣະສັງຄະຣາດ ວັດສັກກະລິນທະຣຸຫາ ໃນປີ ໑໙໓໑ ຊຶ່ງປຣະກອບດ້ວຍ ຄນະ ຄື: ພຣະຄຣູສົມຈິນ ແລະ ພຣະຄຣູທອງດີ ໄດ້ທຳການເຜີຍແຜ່ສິນທັມ ແລະສືບ ສອນຄວາມຈິງ ໃນການຜູກພັທສີມາ ໃນອາວາສຕ່າງໆ ເຊັ່ນ ວັດສີສ່ວາງວົງສ໌ (ເກົ່າ) ແຫ່ງ ແຂວງໄຊຍະບູຣີ, ວັດທາດສາ ນ້ຳອູ ແຫ່ງແຂວງຜົ້ງສາລີ, ວັດບ້ານແສ້ ແຫ່ງ ເມືອງປາກແຊງ, ວັດຊຽງລ້ອມ ແຫ່ງເມືອງຊຽງເງິນ ແລະວັດທັ້ງຫລາຍໃນເທສບານ ນະຄອນຫລວງພຣະບາງ ເປັນຕົ້ນ ແລະໄດ້ໄປທັສນາຈອນ ທາງປຣະເທດຂເມນດ້ວຍ ເມື່ອກັບຈາກປຣະເທດຂເມນ ມາເຖິງແລ້ວ ກໍໄດ້ສ້າງໂຮງຮຽນປາລີສາຂາ ຫລັງນຶ່ງ ຂຶ້ນທີ່ວັດລອງຄູນ ແລະໄດ້ເປັນຄຣູສອນນຳດ້ວຍ.

໕/- ຕໍ່ມາ ເຖິງປີ ໑໙໕໕ ເມື່ອພຣະຄຣູທອງຈັນທຣ໌ ສົມເດັດສັງຄະນາຍົກ ມໍຣະນະພາບໄປແລ້ວ ພຣະອົງຄ໌ທ່ານກໍໄດ້ຮັບຕໍາແໜ່ງເປັນສົມເດັດພຣະສັງຄະຣາດ ມີພຣະນາມວ່າ ທັມມະຍານະມະຫາເຖຣະ.

ລຸນຫລັງພຣະຄຣູນາຣະທະ ແຫ່ງລັງກາທວີບ ໄດ້ນຳໜໍ່ມະຫາໂພທິ ມາສູ່ ພຣະຣາຊອານາຈັກລາວ ແລະໃນປີ ໑໙໔໑ ຣັຖບານພຣະບາດສົມເດັດພຣະເຈົ້າມະຫາຊີວິດ (ສຣີສວ່າງວົງສ໌) ກໍໄດ້ນິມົນຕ໌ໃຫ້ພຣະອົງຄ໌ທ່ານ ເຂົ້າມາປຣະທັບຢູ່ວັດໃໝ່ ສຸວັນນະພູມມາຣາມ ເທສບານຫລວງພຣະບາງ.

໖/- ໃນປີ ໑໙໕໓ ໄດ້ຖືກນິມົນຕ໌ໄປເປັນປຣະທານຮ່ວມໃນພິທີສັຕຖະສັງຄາຍະນາ ແຫ່ງປຣະເທດພະມ້າ (ຢ້າງກຸ້ງ) ຕໍ່ມາເຖິງປີ ໑໙໕໖ ໄດ້ຖືກນິມົນຕ໌ໄປຮ່ວມເປັນປຣະທານພຸທໄຊຍັນຕີ ແຫ່ງປຣະເທດລັງກາ ແລະໄດ້ມາແວ່ນະມັສການສັງເວຊະນີຍະສະຖານ ຄື ບ່ອນພຣະພຸທອົງຄ໌ຊົງປຣະສູຕຣ໌, ຕັສຣູ້, ຊົງສະແດງພຣະທັມມະ

ເທສນາ ແລະບ່ອນຊົງປຣິນິບພານ ຢູ່ປຣະເທດອິນເດັຍ ແລະເລີຍມາແວ່ປຣະເທດພະມ້າ ອີກຄັ້ງນຶ່ງ.

ໃນການທີ່ພຣະອົງທ່ານ ໄດ້ນິມົນໄປຕ່າງປຣະເທດໃນຄັ້ງນີ້ ເມື່ອຈາກວຽງຈັນກໍໄດ້ໄປພັກຢູ່ໃນບາງກອກ ທີ່ວັດເບນຈະມະບໍພິດ ເວລາກັບຄືນກໍຄືກັນ ຊຶ່ງເວລານັ້ນແມ່ນ ສົມເດັດພຣະວັນຣັຕ (ສົມເດັດພຣະສັງຄະຣາດ) ເປັນເຈົ້າອາວາດ ໄດ້ຊົງອຸປະຖັມໃຫ້ໄດ້ຮັບຄວາມສະດວກທັ້ງປວງຢ່າງສົມບູນ.

໔/- ຕໍ່ຈາກນັ້ນມາ ໃນປີ ໑໙໕໗ ທາງການແຫ່ງປຣະເທດພະມ້າກໍໄດ້ເຄນໃບສັນຍາບັດ ຕຳແໜ່ງສາມະນະສັກ ຊັ້ນສູງສຸດຂອງປຣະເທດພະມ້າ ມີນາມວ່າ ອະພິທະຊະມະຫາຣັຖະຄຸຣຸ, ຖວາຍແດ່ພຣະອົງທ່ານ.

<u>ພູມສຶກສາ ແລະຈະຣິຍາວັດ.</u>

ກ. ພຣະອົງຄ໌ທ່ານໄດ້ຜ່ານການສຶກສາສໄມບູຮານ ຊຶ່ງເຂົ້າບວດແລ້ວໄດ້ຮຽນຮູ້ໜັງສືລາວ,ທັມມ໌,ໄທຍ໌,ລື້,ຍວນ ແລະຕົວຂອມ ພ້ອມທັ້ງການຄິດເລກແບບບູຮານຊົງຈຳໄດ້ໜັງສືສູດຣ໌ ຄື: ມົນຕ໌ນ້ອຍ,ມົນກາງ,ສັດທາປາຕິໂມກຂ໌ ແລະສູດຣ໌ມົນຕ໌ເດີກ, ເຄີຍໄດ້ປ່ານພຣະປາຕິໂມກຂ໌ຈົບໂດຍພິສດານ ເປັນອົງຄ໌ທົວທີ.

ຂ. ພຣະອົງຄ໌ທ່ານເຄີຍອົບຮົມ ໃນພິທີທຸດັງຄະວັດ ຕັ້ງຕົ້ນປະຕິບັດຄອງບາດຄອງຜ້າ ຢູ່ບໍຣິວາສກັມ ຈຳລຸກຂະມູນ ເຂົ້າຖ້ຳ ເປັນປະຈຳປີ ຕາມແບບບູຮານ.

ຄ. ພຣະອົງຄ໌ທ່ານ ມີອັຕຊາໄສສນັບສນູນການສຶກສາຂອງພຣະເນນ ທັ້ງໃນແລະນອກປຣະເທດ ທັ້ງຊອບຄົ້ນຄ້ວາແລະທ້ອນໂຮມ ຕຳຣາ ໜັງສືທັມມ໌ ( ໃບຮານ ) ຕ່າງໆ ແລະມີເຈດຈຳນົງປະຕິສັງຂອນ ຖາວະຣະວັດຖຸ ຂອງບູຮານໄວ້.

ງ. ພຣະອົງຄ໌ທ່ານ ມີພຣະໄທ ນ້ອມໄປໃນທຸກສັງຄົມ ເຊັ່ນ ມີຄວາມເອື້ອເຟື້ອ

ເມດຕາທັມມ໌ ເວົ້າກັບຄົນໄດ້ສະດວກ ທຸກເຫລົ່າ ຊາຕ ຊັ້ນ ວັນນະ ໂດຍບໍ່ຖືພຣະກຍດ ແຕ່ຢ່າງໃດ.

໗. ພຣະອົງດ໌ທ່ານ ມີປຣະນິທານປຣາຖນາ ສ້າງພຣະປາຣະມີ ໃນພຸທພູມ ຄື ປຣາຖນາເປັນພຣະສັບພັນຍູພຸດທະ ໃນພາຍໜ້າ ຈິ່ງຈົງອະທິດຖານຖວາຍພຣະອຸຣະ ໄວ້ໃນເພດບັນພຣະຈິດ ພຣະພຸທສາສນາ ຕລອດເວລາ.

-==x ຈົ ບ x=--

ຫລວງພຣະບາງ, ວັນທີ່ ໒໒ ມາກສ໌ ໑໙໕໘, ພ.ສ.໒໕໐໑

ໄດ້ຈົດຕາມຣາຍການໂດຍຈຳເພາະພຣະວາຈາຂອງ ສົມເດັດ,

ຫົວໜ້າຫ້ອງການທັມມະການ ເປັນຜູ້ບັນທຶກ.

ເພັຍສີສຸນທອນ ໂຂວາດ ມຫາອ້ວນ ວິຣະສິທ໌.